<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2006 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະອັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4-6
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 4-6
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 7-9
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-9
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 10-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ທາງທີ່ຈະມີຄວາມສຸກທີ່ແທ້ຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ ບົດທີ 1

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ຕິດຕາມພຣະທັມຂອງພຣະເຈົ້າຈະນຳໄປສູ່ຄວາມສຸກທີ່ແທ້ຈິງຂອງຊີວິດ

**ຄຳຖາມເພື່ອສຳຣວດ:** ຊີວິດແບບໃດທີ່ຈະນຳໄປສູ່ຄວາມສຸກຢ່າງທ້ຈິງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ທ່ານທັງຫລາຍຮູ້ວ່າຜູ້ທີ່ຕິດຕາມແລະຜູ້ທີ່ບໍ່ຕິດຕາມພຣະເຈົ້າມີຊີວິດແຕກຕ່າງກັນຄືແນວໃດ?

## ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ຊີວິດຄຣິສຕຽນແມ່ນຊີວິດທີ່ມີຄວາມແຕກຕ່າງຈາກຊາວໂລກ
- ຢັ້ງຢືນວ່າພຣະຄັມພີມີອຳນາດນຳພາຊີວິດໄປສູ່ຄວາມສຸກທີ່ແທ້ຈິງໄດ້
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ແກ່ທຸກໆຄົນ
- ຂຍາຍການເຕີບໃຫຍ່, ເຮັດໃຫ້ຄວາມເຊື່ອມີຄວາມໝາຍ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຄຣູສອນ, ໃຫ້ເລີ້ມຕົ້ນດ້ວຍການຂຽນລົງໃນກະດານ "ຄວາມສຸກເປັນຂອງບຸກຄົນ.........." (ໃນເຈັ້ຽບົດຮຽນກໍມີຢູ່ແລ້ວ.) ປ່ອຍໂອກາດໃຫ້ນັກຮຽນໄດ້ຕື່ມໃສ່ໃນຫວ່າງຕໍ່ໄປນີ້) ສົນທະນາໄປດ້ວຍ ແລະກໍໃຫ້ບາງຄົນກ່າວຄຳພະຍານດ້ວຍ ຖ້າເປັນໄປໄດ້.

2. ຄວາມສຸກບາງຄັ້ງ ບາງຊີວິດກໍຍັງບໍ່ສາມາດພົບຄວາມສຸກຈັກເທື່ອ. ໂປດແນະນຳໃຫ້ພວກເຂົາເຈົ້າເບິ່ງໃນພຣະຄັມພີເພງສັຣເສີນບົດທີ 1. ແລ້ວກໍໃຫ້ຄົນນຶ່ງອ່ານດັງໆ ວ່າພຣະຄັມພີສອນຢ່າງໃດ?

## ນຳພາສຶກສາພຣະຄັມພີ

3. ອະທິບາຍໃຫ້ນັກຮຽນເຂົ້າໃຈວ່າພຣະທັມເພງສັຣເສີນນີ້ເປັນບົດເພັງແຫ່ງຄວາມເຊື່ອ ເປັນບົດເພັງແຫ່ງຄວາມໄວ້ເນື້ອເຊື່ອໃຈແລະບົດເພັງແຫ່ງຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ.

4. ເພງສັຣເສີນ 1:1, ແນະນຳໃຫ້ພວກເຮົາເຂົ້າໃຈເຖິງຄວາມອ່ອນແອ, ຄວາມບາບ, ແລະຜູ້ທີ່ມັກເຍາະເຍີ້ຍ. ໃຫ້ເບິ່ງໃນເຈັ້ຽບົດຮຽນ. ທ່ານອາດຈະມີພຣະຄັມພີພາສາໄທ ແລະພຣະຄັມພີພາສາລາວ ຫລືບາງຄັ້ງທ່ານກໍອາດຈະອ່ານພຣະຄັມພີພາສາອັງກິດ. ເມື່ອອ່ານແລ້ວໃຫ້ທ່ານຄິດລອງເບິ່ງວ່າທ່ານເຂົ້າໃຈຢ່າງໃດ.

5. ຄຣູຈະອະທິບາຍເຖິງຄຳວ່າ ດຳເນີນ (ຍ່າງ) ຢືນ, ນັ່ງ, ໃຫ້ໃຊ້ຄຳອະທິບາຍໃນເຈັ້ບົດຣຽນ. ຖາມນັກຣຽນວ່າ ເພື່ອຫລີກລຽງຈາກການທຳລາຍຫລືອັນຕລາຍຕ່າງໆ ພວກເຮົາຄວນກະທຳສິ່ງໃດໃນຊີວິດ?

6. ກົດຫມາຍຂອງພຣະເຈົ້າໄດ້ບອກຢ່າງໃດ? ໃຫ້ເບິ່ງໃນເຈັ້ຽບົດຣຽນ.

7. (ຂໍ້3) ແມ່ນຜົນທີ່ຈະຕາມມາຂອງຄົນທີ່ປະຕິບັດຕາມພຣະທັມຂອງພຣະເຈົ້າ ແລະ ຂໍ້ 4 ເຖິງ ຂໍ້ 6 ແມ່ນຜົນຂອງ ຄົນທີ່ບໍ່ປະຕິບັດຕາມພຣະທັມຂອງພຣະເຈົ້າ.

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

8. ໃຫ້ເບິ່ງຄຳຖາມທີ່ຢູ່ໃນເຈັ້ຽບົດຣຽນ ຖາມຄຳຖາມທີ 1,3 ແລະ 4 ແລ້ວຈຶ່ງຫັນມາຖາມຄຳຖາມທີ 2 ຫລັງຈາກນັ້ນໃຫ້ຖາມອີກວ່າເປັນຫຍັງຜູ້ຂຽນເພັງສັຣເສີນ ຈຶ່ງຢາກສິດສອນພວກເຮົາເຖິງຄວາມສຸກ? ແລະເຮັດຢ່າງໃດຈຶ່ງມີຄວາມສຸກທີ່ແທ້ຈິງ?

8. ອີງຕາມເຈັ້ຽບົດຣຽນແລ້ວ "ພວກເຮົາຄວນຈະມີທ່າທີຢ່າງໃດ"?
ແນະນຳນັກຣຽນໃຫ້ດຳເນີນຊີວິດທີ່ມີຄວາມສຸກ, ແລະເປັນຄອບຄົວທີ່ໄດ້ຮັບພຣະພອນ

9. ພາກັນອ້ອນວອນອະທິຖານໃຫ້ພຣະເຈົ້ານຳພາໃຫ້ຫ້ອງຣຽນໄດ້ຮັບພຣະພອນ ແລະໃຊ້ຊີວິດທີ່ໃຫ້ກຽດແກ່ ພຣະເຈົ້າ.

*ດຣ. ບຸຣໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 2

## ທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 3.1-8; 13;1-6; 22:1-5, 22-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ 3; 6; 13; 22

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນວາງໃຈໃນພຣະເຈົ້າ, ເຖິງແມ່ນວ່າ ພຣະອົງຈະຢູ່ຫ່າງໄກ, ແລະຄືວ່າບໍ່ເປັນຫ່ວງເປັນໃຍ ແລະ ບໍ່ຮັບຜິດຊອບຫຍັງເລີຍຕໍ່ຄຳທູນຂໍຂອງພວກເຮົາກໍຕາມ.

**ຄຳຖາມເພື່ອສຳຣວດ:** ທ່ານເຄີຍມີຄວາມສົງສັຍບໍ່ວ່າ ເປັນຫຍັງພຣະເຈົ້າຈຶ່ງຊັກຊ້າໃນການຕອບຄຳອະທິຖານຂອງເຮົາ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາໄດ້ສົມທຽບໃນປະສົບການຂອງຜູ້ຂຽນເພງສັຣເສີນແລະຄວາມສົງສັຍຂອງພວກເຮົາວ່າເປັນຫຍັງພຣະເຈົ້າຈຶ່ງໃຫ້ພວກເຮົາລໍຖ້າດົນແທ້?

**ເນັ້ນຫນັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະ ການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ຫມູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ກ່ອນຈະລົ້ມຕົ້ນບົດຮຽນ ໃຫ້ຄຣູຂຽນຄຳຖາມໃສ່ກະດານວ່າ: " ເປັນຫຍັງພຣະເຈົ້າຈຶ່ງລໍຖ້າດົນນານແທ້ ຈຶ່ງຕອບຄຳຖາມຂອງພວກເຮົາ?"

2. ແບ່ງປັນເຣື່ອງລາວຢູ່ໃນເຈັ້ຍບົດຮຽນ ກ່ຽວກັບເຣື່ອງ ພາຍຸກາຕຣີນາທີ່ຣັດ ລຸຍຊີອານາ. ນັກຮຽນຈະສະແດງທ່າທີອອກມາຄືແນວໃດ ຖ້າເຂົາເຈົ້າຢາກແບ່ງປັນປະສົບການກໍອະນຸຍາດໃຫ້ເຂົາເຈົ້າເວົ້າ.

3. ບອກນັກຮຽນວ່າວັນນີ້ແມ່ນຈະສຶກສາເຣື່ອງ "ທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ" ເຖິງແມ່ນວ່າຈະປະສົບກັບສະພາວະການຕ່າງໆ

### ນຳພາການສຶກສາພຣະຄັມພີ

. ອະທິບາຍຫຍໍ້ໆ "ດາວິດແລະອັບຊາໂລມ" ຊຶ່ງມີຢູ່ໃນເຈັ້ຽບົດຮຽນ ເພື່ອຈະເຂົ້າສູ່ບົດຮຽນເພງສັຣເສີນ ບົດທີ 3. ອາດຈະມີບາງຄົນທີ່ຮູ້ເຣື່ອງນີ້ແດ່ ໃຫ້ເຂົາເຈົ້າກ່າວອອກມາເພື່ອຊ່ວຍກັນ. ຫລືບອກໃຫ້ເຂົາເຈົ້າອ່ານ 2 ຊາມູເອນບົດທີ 13 ຫາບົດທີ 18.

5. ເມື່ອອ່ານບົດເພງສັດເສີນບົດທີ 3 ແລ້ວ ຄຣູຈະອະທິບາຍເຖິງກະສັດດາວິດທູນຂໍຕໍ່ພຣະເຈົ້າ ຊຶ່ງໃນບົດນີ້ຈະມີທັງ ຄວາມທູນຂໍດ້ວຍຄວາມຜິດຫວັງ ແລະມີທັງຄວາມເຊື່ອແລະໝັ້ນໃຈໃນພຣະເຈົ້າ

- ຄວາມທໍ້ຖອຍໃຈມີອັນໃດແດ່?
- ຄວາມເຊື່ອໝັ້ນມີອັນໃດແດ່?

6. ທ່ານເຄີຍມີຄວາມຮູ້ສຶກວ່າພຣະເຈົ້າທອດຖິ້ມທ່ານຫລືບໍ່? ຍົກຕົວຢ່າງ

7. ອີກເທື່ອນຶ່ງໃຫ້ອ່ານ ເພງສັດເສີນ 3:1-6. ດາວິດກ່າວເຖິງການກະທະທຳຂອງພຣະເຈົ້າເພື່ອລາວ ແຕ່ທ່ານເດ ເມື່ອທ່ານປະສົບບັນຫາຢ່າງນີ້ທ່ານຈະກະທຳຢ່າງໃດ?

8. ເພງສັດເສີນ ບົດທີ 22:1-5, 22-24 ສຳລັບບົດນີ້ ແມ່ນສະແດງເຖິງຄວາມຮັກອັນໝັ້ນຄົງຂອງພຣະເຈົ້າ, ຜູ້ ຂຽນຍັງໄດ້ໜູນໃຈໃຫ້ພວກເຮົາສັດເສີນພຣະເຈົ້າບໍ່ວ່າຈະຢູ່ໃນກໍຣະນີໃດໆກໍຕາມ. ອ່ານດັງໆ ແລະຊ້າໆເພື່ອຈະ ໄດ້ຖ້ອຍຄຳທີ່ຈະແຈ້ງ.

<u>ໜູນໃຈໃຫ້ມີການກະທຳ:</u>

9. ພວກເຮົາໄດ້ຮັບບົດຮຽນຫຍັງແດ່ ໃນບົດເພງສັດເສີນທີ່ຮຽນມາໃນວັນນີ້. ຫລືວ່າທ່ານມີສິ່ງໃດທີ່ຈະເສີມຂຍາຍ ຫລືຈະເພີ້ມເຕີມ.

10. ພວກທີ່ໄດ້ຮັບເຄາະກັມຈາກພາຍຸກາຕຣີນາ, ພວກທີ່ນອນຢູ່ໂຮງພະຍາບານ, ພວກທີ່ສູນເສັຽຄົນຮັກເຊັ່ນ ລູກ ຜົວ, ເມັຽເດ ພວກນີ້ພຣະເຈົ້າຫລົງລືມເຂົາເຈົ້າບໍ່? ຈົ່ງອ້ອນວອນເພື່ອເຂົາເຈົ້າພຣະເຈົ້າບໍ່ເຄີຍລືມຄົນຂອງພຣະ ອົງຈັກເທື່ອ.

*ດຣ. ບຸນໂຮມ ພົມມະຈັນ*

# <u>ຄໍາແນະນໍາສໍາລັບຄຣູສອນ</u>
# <u>ບົດຮຽນທີ 3</u>
# <u>ວາງໃຈໃນຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ເພງສັຣເສີນ 23:1-6; 27:1-6

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u>** ເພງສັຣເສີນ ບົດທີ 23 ແລະ 27

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ເຮົາຄວນວາງໃຈໃນຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ ແມ່ນວ່າວິກິດການເລວຮ້າຍຈະເກີດຂື້ນກໍຕາມ.

**<u>ຄໍາຖາມເພື່ອສໍາຣວດ</u>:** ເຮົາຄວນວາງໃຈຄືແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຢັ້ງຢືນເຖິງການວາງໃຈໃນພຣະເຈົ້າ ເວລາມີວິກິດການເກີດຂື້ນ

## <u>ເນັ້ນຫນັກເຖິງການສຶກສາແລະການກະທໍາ</u>

- ຢັ້ງຢືນວ່າພຣະທັມຄັມພີມີອໍານາດໃນການນໍາພາຊີວິດ ແລະ ການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນພຣະກິດຕິຄຸນແກ່ທຸກໆຄົນ

## <u>ແຜນການສິດສອນ</u>

### <u>ນໍາເຣື່ອງເຂົ້າສູ່ຊີວິດຈິງ</u>

1. ອ່ານໃຫ້ເຂົ້າໃ ແລະເລົ່າເຣື່ອງຂອງ ທິມ ໃນຕອນເລີ້ມຕົ້ນຂອງບົດຮຽນ ແລ້ວມາເນັ້ນຫນັກບ່ອນ "ຂ້ອຍຈະພະຍາຍາມເຮັດທຸກສິ່ງຢ່າງໃຫ້ຖືກຕ້ອງ ແລະໄວ້ວາງໃຈໃນພຣະເຈົ້າ"

2. ຜູ້ໃດມີຫຍັງທີ່ຈະປະກອບສ່ວນແດ່?
   - ເປັນຫຍັງ ທິມຈຶ່ງເວົ້າແຕ່ຄໍານີ້ອອກມາ? ຂ້ອຍຈະພະຍາຍາມເຮັດໃຫ້ດີທີ່ສຸດ ແລະວາງໃຈໃນພຣະເຈົ້າ"
   - ເມື່ອທຸກສິ່ງຢ່າງໃນຊີວິດຂອງລາວຫາກລົ້ມເຫລວຢູ່.
   - ທ່ານຄິດຢ່າງໃດກ່ຽວກັບພຣະເຈົ້າຊົງໃຊ້ ໃຫ້ສໍາແດງຄວາມເຊື່ອແລະຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ?
3. ມື້ນີ້ພວກເຮົາຈະມາຮຽນນໍາກັນກ່ຽວກັບຄວາມເຊື່ອຂອງ ທິມ ທີ່ເຂັ້ມແຂງ ແລະພວກເຮົາຄວນປັບປຸງຊີວິດຄວາມເຊື່ອຂອງພວກເຮົາໃຫ້ຕັ້ງຢູ່ເທິງດານຫີນແຫ່ງຄວາມເຊື່ອ.

### <u>ນໍາພາການສຶກສາພຣະຄັມພີ:</u>

4. ໃນເຈັ້ຽບົດຮຽນທ່ານຈະເຫັນໃນພາກທໍາອິດໂລດວ່າ "ພຣະເຈົ້າຊົງລ້ຽງດູຂ້າພະເຈົ້າເຫມືອນຜູ້ລ້ຽງແກະທີ່ດີ." ໃຫ້ຄົນນຶ່ງອ່ານພຣະຄັມພີດັ່ງໆ ເພງສັຣເສີນ 23. ຂໍໃຫ້ຟັງແລະແລ້ວກໍວາດມະໂນພາບໄປດ້ວຍໃຫ້ຄິດເຖິງຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ.

5. ກ່ອນເລີ້ມບົດຮຽນ ໃຫ້ຄຣູຕຽມພ້ອມຂຽນລົງໃນກະດານດັ່ງຕໍ່ໄປນີ້: ຈຸດສຳຄັນຂອງແຕ່ລະຂໍ້ແມ່ນຫຍັງໃຫ້ນັກຮຽນເປັນຜູ້ຕື່ມໃສ່
   ຂໍ້ທີນຶ່ງ: ...................................................... (ຊົງຕອບສນອງຄວາມຕ້ອງການທຸກຢ່າງ)
   ຂໍ້ທີສອງ: .................................................... (ຕຽມທຸກຢ່າງ ແລະໃຫ້ຄວາມລອດພົ້ນ)
   ຂໍ້ທີສາມ: .................................................... (ຟື້ນຊີວິດໃຫມ່ ແລະ ນຳພາໄປໃນທາງດີ)
   ຂໍ້ທີສີ່: ......................................................... (ນຳພາແມ່ນວ່າຈະມີອັນຕລາຍຮອບດ້ານ)
   ຂໍ້ທີຫ້າ: ...................................................... (ສະຖິດຢູ່ນຳເມື່ອປະເຊີນຫນ້າກັບສັດຕຣູ)
   ຂໍທີຫົກ: ...................................................... (ຄວາມດີຂອງພຣະອົງຈະຄຸ້ມຄອງຕລອດຊີວິດ)

6. ເຊີນໃຫ້ຄົນນຶ່ງອ່ານ ເພງສັຣເສີນ 27:1-6
   ເມື່ອອ່ານຈົບລົງແລ້ວ ຖາມຄວາມເຫັນຈາກເຂົາເຈົ້າວ່າ ບົດທີ 23 ແລະບົດທີ 27 ມີຄວາມແຕກຕ່າງກັນຢ່າງໃດ? ສັງເກດເບິ່ງຄຳທີ່ວ່າ "ແສງສະວ່າງ" ແລະ "ຄວາມລອດພົ້ນ" ແລະ "ທີ່ກຳບັງທີ່ເຂັ້ມແຂງ" ໃນ27:1. ພຣະອົງເປັນບ່ອນລີ້ພັຍ ໃຫ້ແຕ່ລະຄົນອະທິບາຍ.

<u>ຄຳຫນູນໃຈສຳລັບບົດຮຽນນີ້:</u>

7. ສົນທະນາກັນ ວ່າຈະນຳໄປໃຊ້ໃນຊີວິດປະຈຳວັນຄືແນວໃດ? ແຕ່ລະຄົນ

8. ຝາກຄຳຖາມໄວ້ກ່ອນຈະອອກຈາກຫ້ອງຮຽນວ່າ "ພຣະເຈົ້າຊົງເປັນຫ່ວງເປັນໃຍຕໍ່ຂ້ອຍ" ໃຫ້ພາກັນນຳມາເວົ້າສູ່ຫມູ່ຟັງໃນອາທິດຫນ້າ

9. ປິດການຮຽນ ໂດຍການອ້ອນວອນອະທິຖານ ເພື່ອຈັດຕຽມການນະມັສການ.

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳຄູສອນ
# ບົດຮຽນທີ 4
# ຫິວກະຫາຍຫາພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ເພງສັຣເສີນ 42-43

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ 42-43

**ຈຸດສຳຄັນຂອງບົດຮຽນນີ້:** ການຮູ້ສຶກວ່າພຣະເຈົ້າຊົງສະຖິດຢູ່ນຳເປັນສິ່ງຈຳເປັນຕໍ່ຊີວິດ ແລະການ ຮູ້ສຶກວ່າພຣະອົງຊົງບໍ່ໄດ້ສະຖິດຢູ່ນຳເຮັດໃຫ້ເກີດຄວາມທຸກໃຈ.

**ຄຳຖາມເພື່ອການສຳຣວດ:** ທ່ານຄິດວ່າຄົນສມັຍນີ້ຄອງຄອຍຫາພຣະເຈົ້າສະຖິດຢູ່ນຳພວກເຂົາຫລືບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການດຳຣົງຊີວິດທີ່ປາສຈາກພຣະເຈົ້າມັນຄ້າຍຄືຕົວກວາງ ສແວງຫານ້ຳເຢັນໃນບຶງພອງນ້ຳ, ບຶງບໍ່ມີນ້ຳມັນຄ້າຍຄືຄຣິສຕຽນບໍ່ມີພຣະເຈົ້າ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອເສີມຂຍາຍຄວາມເຊື່ອໃຫ້ເຂັ້ມແຂງ

## ຄຳນຳ

ການໃຫ້ກຳລັງໃຈຕົນເອງເປັນແຫລ່ງຂອງກຳລັງໃນການງານຕ່າງໆ, ໃນບົດຮຽນວັນນີ້ເຮົາຈະເວົ້າເຖິງຊີວິດຂອງດາວິດທີ່ພົບກັບຄວາມຕໍ່ານ້ອຍຄ້ອຍໃຈ ເມື່ອເພິ່ນມີຄວາມຮູ້ສຶກວ່າພຣະເຈົ້າບໍ່ສະຖິດຢູ່ກັບເພິ່ນ ແຕ່ເພິ່ນເອງພະຍາຍາມໃຫ້ກຳລັງໃຈຕົນເອງວ່າພຣະເຈົ້າຊົງເປັນທີ່ເພິ່ງທາງໃຈຂອງເພິ່ນຢູ່ສເມີ, ເພິ່ນໄດ້ຮ້ອງເປັນເພງໃນຄວາມທຸກໂສກດັ່ງນີ້;

## ເພງຄ່ຳຄວນຫາພຣະເຈົ້າຄັ້ງທີນຶ່ງ (42:1-4)

ກ. ເພິ່ນປຽບຕົວເພິ່ນເປັນຕົວກວາງກຳລັງຊອກຫາສາຍນ້ຳເຢັນ (ຂໍ້ 21).
ຂ. ເພິ່ນຮູ້ສຶກວ່າເພິ່ນເອງຢູ່ຫ່າງໄກພຣະເຈົ້າ ແລະຢາກຢູ່ໃກ້ພຣະເຈົ້າ (ຂໍ້ 2).
ຄ. ເພິ່ນຮູ້ສຶກວ່າພວກສັດຕູເຍາະເຢີ້ຍເພິ່ນໂດຍກ່າວວ່າ "ພຣະເຈົ້າຂອງເຈົ້າຢູ່ໃສ" (ຂໍ້ 3) ຄືບໍ່ເບິ່ງແຍງຫລືຊ່ອຍເຈົ້າ. ຄຳເຍາະເຢີ້ຍຄຳນີ້ຍັງມີມາຈົນເຖິງເທົ່າທຸກວັນນີ້.
ງ. ດາວິດຄຶດເຖິງຕອນເພິ່ນຢູ່ໃນພຣະວິຫານຂອງພຣະເຈົ້າເພິ່ນກໍມີຄວາມສຸກກັບຝູງຊົນຂອງພຣະເຈົ້າ (ຂໍ້ 4).

## ທົບທວນດ້ວຍຄວາມຫວັງຕໍ່ (42:5)

ກ. *"ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ?"* ດາວິດອາດຢາກບອກພຣະເຈົ້າວ່າ ຂ້ານ້ອຍໂສກເສົ້າເພາະຢູ່ໄກພຣະອົງ, ຂ້ານ້ອຍທຸກລຳບາກເພາະບໍ່ມີຜູ້ຊ່ອຍຂ້ານ້ອຍໃນທ່າມກາງນັ້ນ.
ຂ. ຫລືເພິ່ນອາດຈະຖາມພຣະເຈົ້າວ່າ ມັນຈຳເປັນບໍທີ່ຂ້ານ້ອຍຈະຕ້ອງເປັນແນວນີ້?
ຄ. ຫລືຈະເວົ້າໄດ້ວ່າຂ້ານ້ອຍເຮັດຜິດອັນໃດຈຶ່ງເປັນແນວນີ້?
ງ. ໃນທີ່ສຸດດາວິດກໍບອກກັບພຣະເຈົ້າວ່າ ເພິ່ນຈະມອບຄວາມຫວັງໄວ້ກັບພຣະເຈົ້າ ແລະຈະບໍ່ເຊົາສັຣເສີນພຣະອົງ.

## <u>ເພງຄໍ່າຄວນຫາພຣະເຈົ້າຄັ້ງທີສອງ (42:6-10)</u>

ກ. ດາວິດສແດງຄວາມຮັກຢາກຢູ່ໃກ້ພຣະເຈົ້າໃນຂະນະທີ່ເພິ່ນຢູ່ຕ່າງແດນ (ຂໍ້ 6).

ຂ. ເປັນການລໍາພຶງລໍາພັນຂອງນັກກະວີ (ຂໍ້ 7).

ຄ. *ຂໍໃຫ້ພຣະຜູ້ເປັນເຈົ້າສະແດງຄວາມຮັກອັນໝັ້ນຄົງທຸກວັນຄືນ* (ຂໍ້ 8) ແປວ່າ ພຣະເຈົ້າຊົງເປັນຜູ້ສ້າງສັພສິ່ງ ຂໍພຣະອົງຊົງຮັກສິ່ງທີ່ພຣະອົງຊົງສ້າງ, ໂດຍປົກປ້ອງປ້ອງເໝືອນດັ່ງພຣະອົງຊົງປົກປ້ອງອາດາມໃນເບື້ອງຕົ້ນ.

ງ. *"ເປັນຫຍັງພຣະອົງຊົງລືມຂ້ານ້ອຍ"* (ຂໍ້ 9-10) ແປວ່າຂໍພຣະອົງຊົງຈື່ຈໍາຂ້ານ້ອຍແດ່ ເພາະວ່າສັດຕູຂົ່ມເຫງ.

## <u>ທົບທວນດ້ວຍຄວາມຫວັງຕໍ່ (42:11)</u>

ກ. ຂໍ້ 5, ຂໍ້ 11 ແລະ 43:5 ເປັນຄໍາເວົ້າຊໍ້າຄວາມກັນ.

ຂ. ຫາກເວົ້າເຖິງເທື່ອນຶ່ງຂຶ້ນໄປສະແດງວ່າເປັນການເນັ້ນໜັກໃນຄໍາເວົ້ານັ້ນ.

## <u>ເພງຄໍ່າຄວນຫາພຣະເຈົ້າຄັ້ງທີສາມ (43:1-4)</u>

ກ. *ຂໍພຣະອົງປະກາດຄວາມບໍຣິສຸດ* "(ຂໍ້ ). ດາວິດສະແດງຄວາມບໍຣິສຸດໃຈຂອງເພິ່ນຕໍ່ພຣະເຈົ້າແລະຂໍໃຫ້ພຣະເຈົ້າ ຕັດສິນໃນຄວາມບໍຣິສຸດຂອງເພິ່ນ.

ຂ. ດາວິດບອກກັບພຣະເຈົ້າວ່າ ຫາກບໍ່ມີພຣະເຈົ້າດາວິດກໍບໍ່ມີບ່ອນເພິ່ງ (ຂໍ້ 2).

ຄ. ຂໍຄືນເມືອງຊີໂອນ (ຂໍ້ 3) ແປວ່າຂໍຢູ່ໃກ້ພຣະເຈົ້າ ເພາະພວກຜູ້ຮັບໃຊ້ພຣະເຈົ້າເຊື່ອວ່າພູຊີໂອນເປັນພູສັກສິດທີ່ພຣະ ເຈົ້າສະຖິດຢູ່ທີ່ນັ້ນ.

ງ. ດາວິດປະຕິຍານວ່າຫາກໄດ້ຢູ່ໃກ້ພຣະເຈົ້າຈະປົນນິບັດພຣະເຈົ້າຢ່າງດີ (ຂໍ້ 4).

## <u>ທົບທວນດ້ວຍຄວາມຫວັງຕໍ່ (43:5 )</u>

ກ. ດາວິດໄດ້ເວົ້າຢໍ້າອີກເພື່ອສະແດງຄວາມໄວ້ວາງໃຈໃນພຣະເຈົ້າ.

ຂ. ຄໍາປະຕິຍານຕົວຂອງດາວິດ ຈະບໍ່ເຊົາສັຣເສີນພຣະເຈົ້າ ບໍ່ວ່າຈະໂສກເສົ້າຫລືທຸກໃຈກໍຈະສັຣເສີນສເມີ.

*ດຣ. ທຸມພັນ ວົງສຸຣິດທ໌*

**<u>ບົດແນະນຳຄຣູສອນ</u>**

**<u>ບົດຮຽນບົດທີ 5</u>**

**<u>ເກືອບສົງສັຍ</u>**

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເພງສັຣເສີນ 73

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເພງສັຣເສີນ 73

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເມື່ອເກີດສົງສັຍຄວນແກ້ໄຂຢ່າງໄວ

**<u>ຄຳຖາມເພື່ອການສຳຣວດ:</u>** ການໄວ້ວາງໃຈໃນພຣະເຈົ້ານັ້ນຄຸ້ມຄ່າບໍ່?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອບັລຍາຍເພງສັຣເສີນເກືອບສົງສັຍແລະຫາເຫດຜົນໃນຄວາມເຊື່ອຖືພຣະເຈົ້າ.

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

**<u>ບົດນຳ</u>**

ທ່ານອາຈເຄີຽໄດ້ຍິນວ່າພວກຜູ້ເຖົ້ານອນບໍ່ຫລັບ, ຫລືອາດຖືກທ່ານເອງນອນບໍ່ຫລັບ ການນອນບໍ່ຫລັບເປັນການທໍຣະມານຢ່າງນຶ່ງ ເພາະວ່າໃນສມອງມີແຕ່ຄວາມຄິດ ຫລືລາງຄົນອາດເວົ້າວ່າບໍ່ໄດ້ຄິດຫຍັງວ່າຊັ້ນ. ຄົນນອນບໍ່ຫລັບແມ່ນມີອາການຢ່າງໃດຢ່າງນຶ່ງເກີດຂຶ້ນໃນຮ່າງກາຍ, ໃນສມອງຈຶ່ງເຮັດໃຫ້ຕົວເອງເຈັບແສບຍ້ອນຄວາມຄິດ. ດາວິດເປັນເຖິງເຈົ້າຊີວິດ ເພິ່ນຄິດອິດສາຄົນຊົ່ວທີ່ໄດ້ດີ ຈຶ່ງເຮັດໃຫ້ເພິ່ນເກືອບສົງສັຍໃນພຣະເຈົ້າ.

**<u>ຄວາມຄິດທີ່ຜິດປົກກະຕິ 73:1-12</u>**

1. ຄຳວ່າພຣະເຈົ້າຊົງດີ(ຂໍ້ 1) ແປວ່າ ພຣະອົງຊົງລ້ຽງດູປະຊາຊົນຂອງພຣະອົງໃຫ້ອີ່ມໜຳສຳຣານ, ຊົງປົກປ້ອງເຂົາຈາກພະຍາດຕ່າງໆ, ຊົງປົກປ້ອງເຂົາບໍ່ໃຫ້ສັດຕຣູມາຢຽບຢ່ຳທຳລາຍເຂົາ, ພຣະເຈົ້າບໍ່ທຳລາຍຄົນຊົ່ວ.
2. ຄຳວ່າຜູ້ທີ່ມີຈິດໃຈບໍຣິສຸດ ແມ່ນຜູ້ບໍ່ແບ່ງຈິດໃຈໄປນະມັສການພຣະອື່ນ ແລະນະມັສການພຣະອົງຕາມກຳໜົດເວລາ.
3. *ແຕ່ຝ່າຍຂ້ານ້ອຍເກືອບລົ້ມລົງ*(ຂໍ້ 2). ແປວ່າມີຈິດໃຈບໍຣິສຸດຕໍ່ພຣະເຈົ້າ ແຕ່ໄປຄິດອິດສາຄົນຊົ່ວຮ້າຍທີ່ຈະເຣີນຮຸ່ງເຮືອງເປັນການບໍ່ສົມຄວນຈະປຽບທຽບ.
4. ເກືອບລົ້ມແຕ່ບໍ່ລົ້ມ ແປວ່າພຣະເຈົ້າຊົງຊ່ອຍແລະສະຖິດຢູ່ນຳ
5. ອິດສາຄົນຈອງຫອງ(ຂໍ້ 3). ຫລືຄົນຊົ່ວແປວ່າ ເຫັນຄົນຊົ່ວຈະເຣີນຮຸ່ງເຮືອງ ເພິ່ນບໍ່ດີໃຈ
6. ຈະເຣີນຮຸ່ງເຮືອງ (ຂໍ້ 3) ແປວ່າສຸຂພາບດີ, ຮັ່ງມີເປັນດີທັງຍົດຖາບັນດາສັກແລະຊັບສົມບັດ.
7. ດາວິດຈົ່ມຕໍ່ພຣະເຈົ້າ (ຂໍ້ 4-8)
8. ດາວິດກ່າວຟ້ອງພຣະເຈົ້າ (ຂໍ້ 9-12)

## ຄວບຄຸມຄວາມຄິດ 73:13-17

1. ດາວິດຈົ່ມວ່າເປັນຄົນບໍລິສຸດບໍ່ມີປະໂຍດຫຍັງບໍ່?
2. ດາວິດຄິດວ່າພຣະເຈົ້າລົງໂທດເພິ່ນທຸກມື້.
3. ດາວິດບໍ່ເຂົ້າໃຈແຜນການຂອງພຣະເຈົ້າ
4. ດາວິດພະຍາຍາມເຂົ້າໃຈພຣະເຈົ້າ (ຂໍ້ 16).

## ໝັ້ນຄົງໃນຄວາມເຊື່ອ 73:18-28

1. ພຣະເຈົ້າຈະບໍ່ຊ່ອຍຄົນຊົ່ວທີ່ກຳລັງຈະລົ້ມ (ຂໍ້ 18).
2. ພວກເຂົາຖືກທຳລາຍໃນປັບດຽວ (ຂໍ້ 19). ແປວ່າທຸກສິ່ງທີ່ມີຕລອດທັງຊີວິດຈະເສັຽໄປຊົ່ວພິບຕາດຽວ.
3. ດາວິດສາຣະພາບວ່າເພິ່ນເອງໂງ່ຈ້າ ບໍ່ເຂົ້າໃຈເຣື່ອງພຣະເຈົ້າ (ຂໍ້ 22-24).
4. ດາວິດອ້ອນວອນສາຣະພາບວ່າເພິ່ງແຕ່ພຣະເຈົ້າ ແລະຈະປະກາດຄຸນຄວາມດີຂອງພຣະເຈົ້າ (ຂໍ້ 25-28).

## ຄຳຖາມ

1. ທ່ານມີຄວາມຄິດແນວໃດ ເມື່ອທ່ານເອງເຮັດບໍ່ໄດ້ດີ ແຕ່ພວກເຮັດຊົ່ວກັບໄດ້ດີ?

2. ການເຊື່ອຟັງແລະຕິດຕາມພຣະເຈົ້າຢ່າງຊື່ສັດ ແຕ່ກໍພົບກັບບັນຫາຢູ່ເລື້ອຍທ່ານຮູ້ສຶກແນວໃດ?

3. ທ່ານຮູ້ສຶກວ່າພຣະເຈົ້າປະຖິ້ມທ່ານບໍ່ເມື່ອອ້ອນວອນແລ້ວບໍ່ໄດ້ຮັບຄຳຕອບ?

4. ທ່ານໄດ້ອ້ອນວອນບອກເຣື່ອງໃນໃຈຂອງທ່ານຕໍ່ພຣະເຈົ້າຢ່າງຈິງຈັງບໍ່?

5. ຫາກທ່ານຄິດສົງສັຍໃນພຣະເຈົ້າທ່ານຈະໄປປຶກສາກັບໃຜ?

6. ເຮັດແນວໃດທ່ານຈຶ່ງຈະໄວ້ວາງໃຈໃນພຣະເຈົ້າຄືກັບດາວິດ?

## <u>ບົດແນະນຳຄູສອນ</u>

## <u>ບົດຮຽນບົດທີ່ 6</u>

## <u>ພໍໃຈຢູ່ໃນພຣະວິຫານ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເພງສັຣເສີນ 84

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເພງສັຣເສີນ 76; 84; 87

<u>ຈຸດສຳຄັນຂອງບົດຮຽນນີ້:</u> ການນະມັສການຮ່ວມກັນເຮັດໃຫ້ຮູ້ຈັກຮັກແພງກັນ

<u>ຄຳຖາມເພື່ອການສຳຣວດ:</u> ການນະມັສການຮ່ວມກັບເພື່ອຝູງເຮັດໃຫ້ທ່ານມີຄວາມສຸກໃຈບໍ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອນຳທ່ານໃຫ້ພໍໃນທີ່ຈະຢູ່ກັບຄຣິສຕຽນດ້ວຍກັນ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### <u>ບົດນຳ</u>

ເພງສັຣເສີນບົດ 84 ນີ້ບໍ່ໄດ້ບອກຊື່ຂອງຜູ້ແຕ່ງຢ່າງຊັດເຈນ ເຮົາພໍຈະຮູ້ໄດ້ວ່າເພິ່ນເປັນຫົວໜ້າວົງດົນຕຣີແລະເປັນລູກຊາຍຂອງທ່ານ ໂຄຣາ ຜູ້ເປັນນັກຮ້ອງປະສານສຽງໃນພຣະວິຫານຂອງພຣະເຈົ້າ. ໃນບົດເພງສັຣເສີນເຮົາຈະເຫັນວ່າການຕັ້ງແຖວຄຳເວົ້າແລະລົງແຖວບໍ່ສະເໝີສະເໝີກັນ ທັງນີ້ກໍເນື່ອງຈາກວ່າໂຄງຮ່າງກາບກອນ ແລະຫລັກໄວຍະກອນຂອງເຮັບເຣີເປັນແນວນັ້ນ. ຫາກຢາກຈະເຂົ້າໃຈໃນເຣື່ອງຂອງກາບກອນແລະຫລັກໄວຍະກອນນີ້ທ່ານຈຳຕ້ອງໄປຮຽນທີ່ໂຮງຮຽນພຣະຄັມພີຈຶ່ງຈະເຂົ້າໃຈໄດ້ ແລະທ່ານບໍ່ຈຳເປັນຈະຕ້ອງເຂົ້າໃຈໃນເວລານີ້.

### <u>ພໍໃຈໃນພຣະວິຫານ 84:1-4</u>

ກ. ຄຳອ້ອນວອນດ້ວຍສຽງເພງ *ຂ້າແດ່ອົງພຣະຜູ້ເປັນເຈົ້າແຫ່ງຈັກກະວານ* "(ຂໍ້ 1ກ). ຮ້ອງອອກພຣະນາມໂດຍສະເພາະພຣະເຈົ້າເທົ່ານັ້ນ.

ຂ. "*ຂ້ານ້ອຍຮັກແລະຢາກຢູ່ໃນພຣະວິຫານຂອງພຣະອົງອີ່ຫລີ*" (ຂໍ້ 1ຂ)ຮັກພຣະວິຫານຂອງພຣະເຈົ້າໝາຍຄວາມວ່າບົວຣະບັດຮັກສາ, ທະນຸຖະໜອມ, ປົວແປງໃຫ້ເປັນຕາຢູ່, ປັດເຊັດບໍ່ໃຫ້ເສົ້າໝອງ.

ຄ. "*ຢາກຢູ່ໃນພຣະວິຫານຂອງພຣະອົງອີ່ຫລີ*" *(ຂໍ້ 1ຄ)*

1. ໄດ້ຢູ່ໃກ້ກັບພຣະເຈົ້າ.
2. ໄດ້ຢູ່ໃກ້ກັບໄພ່ພົນຂອງພຣະເຈົ້າ.
3. ຕຶກອາຄານພຣະວິຫານ ດຶງດູດຈິດໃຈໃຫ້ຢາກມາຢູ່.

ງ. *ນົກຈອກແລະນົກແອ່ນກໍຍັງມີຮັງຢູ່* " (ຂໍ້3ຄ) ເປັນການເວົ້າຍົກຍ້ອງພຣະວິຫານແມ່ນແຕ່ນົກກໍຢາກຢູ່.

1. ນົກຈະຢູ່ຢ່າງປອດພັຍ.
2. ມັນຈະໄດ້ຍິນຄຳສັ່ງສອນພຣະເຈົ້າ.

3. ພວກມັນຈະຮ້ອງເພງສັຣເສີນພຣະເຈົ້າ.

**ອອກນອກພຣະວິຫານ 84:5-12**

ກ. *ຄວາມສຸກເປັນຂອງຜູ້ໄດ້ຮັບເຫື່ອແຮງມາຈາກພຣະອົງ* "(ຂໍ້ 5ກ).

1. ຄຳວ່າ "ຄວາມສຸກ" ແປມາຈາກຄຳວ່າ Blessed ແປວ່າຄວາມສຸກ.

2. ເຫື່ອແຮງມາຈາກການນະມັສການ.

ຂ. "*ຂະນະທີ່ພວກເຂົາໄດ້ເດີນທາງຜ່ານໄປໃນຮ່ອມພູທີ່ແຫ້ງແລ້ງ ບ່ອນນັ້ນກໍກາຍເປັນບ່ອນທີ່ບໍ່ມີນ້ຳ* "(ຂໍ່ 6ຂ)

1. ພາສາລາວພິມຜິດ ສົມຄວນຈະວ່າ *ບ່ອນນັ້ນກໍກາຍເປັນບ່ອນທີ່ມີນ້ຳ.*

2. ຄຳວ່າບາຄາແປວ່າບ່ອນພູເຂົາຮ້ອງໄຫ້, ມັນອາຈໜ້າຢ້ານແລະຍັງເປັນພູແຫ້ງແລ້ງບໍ່ມີນ້ຳດື່ມອີກ.

3. "*ບ່ອນນັ້ນກໍກາຍເປັນບ່ອນທີ່ມີນ້ຳ* "(ຂໍ້ 6ຄ). ແປວ່າຄົນຂອງພຣະເຈົ້າເມື່ອຮັບພຣະພອນໃນເວລານະມັສ ແລ້ວເມື່ອລາວອອກໄປບ່ອນແຫ້ງແລ້ງກໍຈະກາຍເປັນບ່ອນຊຸ່ມເຢັນ.

4. "*ໃນຂະນະທີ່ເຂົາຍ່າງໄປ ເຂົາໄດ້ມີແຮງຫລາຍຂຶ້ນຫລາຍກວ່າເກົ່າ* "(ຂໍ້ 7) ເພາະການຍ່າງໄປນະມັສ ການເປັນການເພີ້ມກຳລັງ.

ຄ. "*ເຂົາຈະເຫັນພຣະເຈົ້າ ຂອງພຣະທັງຫລາຍເທິງພູຊີໂອນ* "(ຂໍ້ 7ຂ) ຜູ້ນະມັສການພຣະເຈົ້າຈະພົບກັບພຣະເຈົ້າທີ່ພູ ສັກສິດຊີໂອນ, ແລະພຣະເຈົ້າອົງນີ້ເປັນພຣະເຈົ້າຂອງພຣະຕ່າງໆ.

ງ. "*ຢູ່ໃນພຣະວິຫານຂອງພຣະອົງມື້ດຽວ ກໍມີຄວາມສຸກກວ່າພັນມື້ໃນແຫ່ງອື່ນ* "(ຂໍ້ 10ກ) ແມ່ນການປຽບທຽບການ ໄດ້ຜົນກຳໄລຈາກພຣະວິຫານ.

ຈ. "*ພຣະອົງບໍ່ປະຕິເສດທີ່ຈະໃຫ້ຂອງປະທານອັນດີແກ່ຜູ້ທີ່ເຮັດຕາມທາງສິນທັມ* "(ຂໍ້ 11ງ) ພຣະເຈົ້າຈະບໍ່ໃຫ້ທຸກຢ່າງ ຕາມໃຈຂອງເຮົາ ແຕ່ຈະໂຜດປະທານຂອງດີ ໝາຍຄວາມວ່າຂອງຈຳເປັນທີ່ຈະຕ້ອງໃຊ້ໃນທາງສິນທັມໃນຂະນະ ທີ່ຢູ່ໃນໂລກນີ້.

*ດຣ. ທຸມພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# ໃຊ້ຊີວິດທີ່ມີຄວາມໝາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພັງສັຣເສີນ 90

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ເພັງສັຣເສີນ 90

**ຈຸດສຳຄັນຂອງບົດຮຽນນີ້:** ເຖິງວ່າຊີວິດນີ້ຈະສັ້ນແລະມີປັນຫາ, ພວກເຮົາສາມາດທີ່ຈະຊື່ນຊົມຍິນດີແລະຈະເຮັດໃຫ້ຊີວິດນີ້ມີຄວາມໝາຍໄດ້ ເມື່ອພວກເຮົາມີຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະພົບຄວາມໝາຍຂອງຊີວິດທີ່ສັ້ນໆ ແລະເຕັມໄປດ້ວຍປັນຫານີ້ໄດ້ຈາກໃສ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະເອົາຕົວຢ່າງຈາກຜູ້ຂຽນບົດເພງສັຣເສີນກ່ຽວກັບຊີວິດ ແລະວິທີທີ່ລາວສາມາດພົບຄວາມໝາຍໃນຊີວິດນີ້ ຖ່າມກາງຄວາມຫ່ວງໃຍຕ່າງໆ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດ (ໃຊ້ເວລາ 5 ນາທີ)

1. ກ່ອນມື້ຮຽນ, ໃຫ້ຕຽມຄຳພຍານສ່ວນຕົວເຣື່ອງການປ່ຽນແປງໃນຊີວິດຂອງທ່ານເພາະການດຳເນີນຊີວິດແບບເປັນຕົວຢ່າງຂອງຄົນຜູ້ນຶ່ງ. ເລີ້ມບົດຮຽນໂດຍການເລົ່າຄຳພຍານທີ່ທ່ານໄດ້ຕຽມໄວ້ແລ້ວນັ້ນ.

2. ໃຫ້ນັກຮຽນບາງຄົນບອກຊື່ຄົນທີ່ພວກເຂົາເຈົ້ານັບຖື; ບາງເທື່ອເຂົາເຈົ້າອາດຈະບໍ່ຮູ້ຄົນຜູ້ນັ້ນເປັນທາງສ່ວນຕົວ. ໃຫ້ເຂົາເຈົ້າເລົ່າເຣື່ອງວ່າບຸກຄົນນັ້ນປ່ຽນແປງຊີວິດຂອງຄົນແນວໃດແດ່ (ບຸກຄົນນັ້ນອາດຈະເປັນຄຣູ, ພໍ່ແມ່, ຫືວໝ້າງານ, ຄຸນແມ່ເຕຣີສາ, ທ່ານບິນລີ ແກຣມ, ແລະຕໍ່ໆໄປ)

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ແຈກກະດາດໃຫ້ນັກຮຽນຄົນລະໃບ. ແນະນຳໃຫ້ເຂົາເຈົ້າບັນທຶກຄວາມເວົ້າ, ຄຳເຫັນ, ຫລືທິສດີ ທີ່ບອກເຖິງພຣະເຈົ້າໃສ່ຂ້າງເທິງຂອງເຈັ້ຽ ແລະໃຫ້ບັນທຶກສິ່ງຕ່າງໆກ່ຽວກັບມະນຸດ ແລະສິ່ງທີ່ພວກເຂົາເຮັດໃນ ຂ້າງລຸ່ມຂອງເຈັ້ຽ ໃນເວລາທີ່ທ່ານອະທິບາຍບົດເພງສັຣເສີນ 90.

4. ຂຽນໃສ່ກະດານ "ສັຣເສີນພຣະເຈົ້າຜູ້ຊົງເປັນຢູ່ຊົ່ວນິຣັນ." ອະທິບາຍເພງສັຣເສີນ 90:1-2. ຖາມ, ພຣະທັມເຫລົ່ານີ້ບອກເຮົາແນວໃດແດ່ກ່ຽວກັບພຣະເຈົ້າ? ໃຊ້ເວລາສົນທະນາ.

5. ຂຽນໃສ່ກະດານ "ຄວາມສັ້ນຂອງຊີວິດມະນຸດ." ອະທິບາຍເພງສັຣເສີນ 90:3-6. ຖາມ, ອີງຕາມອາຍຸຂອງທ່ານ, ທ່ານຄິດວ່າຊີວິດນີ້ສັ້ນຫລືຍາວ? ຄວາມເຫັນຂອງທ່ານແຕກຕ່າງກັບຄວາມຄິດຂອງຜູ້ຂຽນເພງສັຣເສີນແນວໃດ? ໃຫ້ເວລາຕອບ.
6. ຂຽນໃສ່ກະດານ "ຄວາມຜິດບາບໃນຊີວິດມະນຸດ." ອະທິບາຍເພງສັຣເສີນ 90: 7-10. ຖາມ, ທ່ານຮູ້ສຶກແນວໃດເວລາໄດ້ຍິນເຣື່ອງພຣະພິໂຣດຂອງພຣະເຈົ້າ? ຊ່ວຍນັກຮຽນຕອບໂດຍໃຊ້ສິ່ງທີ່ບັນທຶກໄວ້ໃນຂໍ້ສາມທີ່ຜ່ານມາ.

7. ຂຽນໃສ່ກະດານ "ຄຳອ້ອນວອນຕໍ່ພຣະເຈົ້າ." ອະທິບາຍເພງສັຣເສີນ 90:11-17. ໃຫ້ທຸກຄົນກົ້ມຫົວຫຼັບຕາ. ຊັກຊວນແຕ່ລະຄົນໃຫ້ສາຣະພາບຄວາມຜິດບາບຕໍ່ພຣະເຈົ້າ ແລະຂໍການອະພັຍໂທດຈາກພຣະອົງ. ທ້າຍສຸດໃຫ້ທ່ານເປັນຄົນອ້ອນວອນອອກສຽງເພື່ອທຸກຄົນ; ຂອບຄຸນພຣະເຈົ້າສຳລັບຄວາມເມດຕາຂອງພຣະອົງ.

## <u>ນຳບົດຣຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃຫ້ຜູ້ໃດຜູ້ນຶ່ງແບ່ງປັນສິ່ງທີ່ເຂົາເຈົ້າໄດ້ບັນທຶກໄວ້ໃນເຈັ້ຽ. ໃຫ້ອ່ານແລະບໍ່ຕ້ອງອະທິບາຍ. ໜູນໃຈທຸກຄົນທີ່ໄດ້ແບ່ງປັນ. ຖາມ: ພວກທ່ານຄິດແນວໃດກ່ຽວກັບການ "ໃຊ້ຊີວິດທີ່ມີຄວາມໝາຍ."

9. ຊັກຊວນແຕ່ລະຄົນໃຫ້ພິຈາຣະນາເບິ່ງຕົວເອງ; ຊັກຊວນແຕ່ລະຄົນໃຫ້ດຳເນີນຊີວິດເພື່ອຊີວິດນິຣັນດອນ ແລະໃຫ້ໃຊ້ຊີວິດເພື່ອຊ່ວຍປ່ຽນແປງຄົນອື່ນໆ. ອ່ານເພງສັຣເສີນ 90:12-14 ແລະໃຫ້ຄົນນຶ່ງອ້ອນວອນປິດການຣຽນ.

*ດຣ. ສີດາ ຄານ*

# <u>ຄຳແນະນຳສຳລັບຄຣູ</u>
# <u>ບົດຮຽນບົດທີ 8</u>
# <u>ສັຣເສີນຄຸນຄວາມດີຂອງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເພັງສັຣເສີນ 100; 103
**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ເພັງສັຣເສີນ 100; 103; 105
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ສັຣເສີນຄຸນຄວາມດີຂອງພຣະເຈົ້າ ທີ່ໄດ້ຊົງສະແດງໃຫ້ເຫັນຫລາຍໆວິທີ.
**<u>ຄຳຖາມເພື່ອການສຳຣວດ:</u>** ພຣະເຈົ້າໄດ້ຊົງສະແດງຄຸນຄວາມດີຂອງພຣະອົງໃຫ້ທ່ານເຫັນວິທີໃດແດ່?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຮູ້ວິທີຕ່າງໆທີ່ພຣະເຈົ້າໄດ້ຊົງສະແດງຄຸນຄວາມດີຂອງພຣະອົງໃຫ້ກັບຂ້ອຍ ແລະເພື່ອຈະຮູ້ຈັກວິທີທີ່ຈະສັຣເສີນພຣະອົງ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດ (ໃຊ້ເວລາ 5 ນາທີ)</u>

1. ພານັກຮຽນຮ້ອງເພງ "ໃຫ້ຟ້າກັບໂລກຍ້ອງຍໍພຣະເຈົ້າ." ຫລັງຈາກຮ້ອງເພງແລ້ວໃຫ້ແນະນຳວ່າບົດເພງສັຣເສີນ 100, 103, ແລະ105 ເປັນເພງສຳລັບການສັຣເສີນ. ບອກນັກຮຽນວ່າຜູ້ຂຽນເພງ "ໃຫ້ຟ້າກັບໂລກຍ້ອງຍໍພຣະເຈົ້າ" ພາສາອັງກິດແມ່ນທ່ານ ໂຕມາ ເຄັນ; ທ່ານໄດ້ຂຽນເພງນີ້ໂດຍອີງໃສ່ຄຳເວົ້າໃນບົດເພງສັຣເສີນ 100. ອະທິຖານເປີດການຮຽນ.

2. ອ່ານ "ຈຸດສຳຄັນຂອງບົດຮຽນນີ້." ຢາຍເຈັ້ຽໃຫ້ນັກຮຽນຄົນລະໃບ; ບອກທຸກຄົນວ່າມື້ນີ້ພວກເຮົາຈະຮຽນເຣື່ອງການສັຣເສີນພຣະເຈົ້າ ແລະຈະຂຽນຄຳສັຣເສີນພຣະເຈົ້າຂອງພວກເຮົາເອງ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ຂຽນໃສ່ກະດານ "ຄຳສັຣເສີນພຣະເຈົ້າ." ບອກແຕ່ລະຄົນໃຫ້ຂຽນໃສ່ຂ້າງເທິງເຈັ້ຽຂອງເຂົາເຈົ້າ. ຕໍ່ມາໃຫ້ຂຽນ "ຄຳເຊີນໃຫ້ສັຣເສີນຄຸນຄວາມດີຂອງພຣະເຈົ້າ" ເປັນຫົວຂໍ້ນ້ອຍ. ອະທິບາຍເພງສັຣເສີນ 100:1-4 ແລະ 103: 1-2. ເນັ້ນຄຳສັ່ງເຈັດຢ່າງໃນພາກນີ້. ໃຫ້ທຸກຄົນຂຽນຄຳເຊີນເພື່ອໃຫ້ຄົນອື່ນໆສັຣເສີນພຣະເຈົ້າ ໃສ່ໃນເຈັ້ຽ.

4. ຂຽນຫົວຂໍ້ນ້ອຍຂອງບົດຮຽນໃສ່ກະດານ "ອະທິບາຍເຣື່ອງຄຸນຄວາມດີຂອງພຣະເຈົ້າ." ອະທິບາຍເພງສັຣເສີນ 100:5; 103:3-19. ເນັ້ນສາມຢ່າງ ເຊັ່ນ: ຄຸນຄວາມດີ, ຄວາມຮັກ, ແລະຄວາມສັດຊື່. ໃຫ້ແຕ່ລະຄົນຂຽນສິ່ງທີ່ພຣະເຈົ້າໄດ້ກະທຳຊຶ່ງສົມຄວນໄດ້ຮັບການສັຣເສີນຫ້າຢ່າງສຳລັບເຂົາເຈົ້າເອງໃສ່ກ້ອງຫົວຂໍ້ນ້ອຍໃນເຈັ້ຽ.

5. ຂຽນ "ຄຳຢືນຢັນການຊົງສ້າງຂອງພຣະເຈົ້າ" ໃສ່ເຈັ້ຽຂອງໃຜລາວ. ອະທິບາຍເພງສັຣເສີນ 103:20-22. ໃຫ້ແຕ່ລະຄົນຂຽນຄຳເຊີນໃຫ້ຄົນທັງຫລາຍສັຣເສີນພຣະເຈົ້າ.

6. ຊວນນັກຮຽນໃຫ້ເປີດເບິ່ງເພງສັຣເສີນ 136. ເຊີນຜູ້ນຶ່ງໃຫ້ອ່ານ ແລະໃນຂະນະດຽວກັນ ໃຫ້ທຸກຄົນເວົ້າພ້ອມກັນວ່າ "ຄວາມຮັກຂອງພຣະອົງດຳລົງຢູ່ສືບໄປເປັນນິດ" ໃນຕອນທ້າຍຂອງແຕ່ລະຂໍ້.

**<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>**

7. ໃຫ້ຜູ້ນຶ່ງອ່ານຄຳສັຣເສີນທີ່ລາວໄດ້ຂຽນໄວ້ໃຫ້ທຸກຄົນຟັງ. ຖ້າບໍ່ມີໃຜສມັກ, ທ່ານອາດຈະໄດ້ອ່ານຄຳສັຣເສີນຂອງຕົວທ່ານເອງໃຫ້ນັກຮຽນຟັງ.

8. ຊັກຊວນໃຫ້ຜູ້ນຶ່ງນຳເອົາຄຳສັຣເສີນຂອງລາວໄປອ່ານໃນຕອນນະມັສການ. ທ່ານອາດຈະພາທຸກຄົນຮ້ອງເພງ "ໃຫ້ຟ້າກັບໂລກຍ້ອງຍໍພຣະເຈົ້າ" ອີກເທື່ອນຶ່ງໃນຕອນນະມັສການ.

*ດຣ. ສິດນີ ຄານ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນບົດທີ 9
## ຂອບຄຸນສຳລັບພຣະພອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 116
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ເພງສັຣເສີນ 107; 116
**ຈຸດສຳຄັນຂອງບົດຮຽນນີ້:** ພຣະພອນໃນເວລາຂາດເຂີນເຮັດໃຫ້ພວກເຮົາຢາກຂອບພຣະຄຸນດ້ວຍຄວາມຈິງໃຈ.
**ຄຳຖາມເພື່ອການສຳຣວດ:** ທ່ານຈະເວົ້າຫຍັງແດ່ເພື່ອຂອບພຣະຄຸນພຣະເຈົ້າ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວິທີຕ່າງໆທີ່ຈະຂອບພຣະຄຸນພຣະເຈົ້າສຳລັບພຣະພອນທັງຫລາຍ.

### ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດ (ໃຊ້ເວລາ 5 ນາທີ)**

1. ຂຽນໃສ່ກະດານ "ວິທີຕ່າງໆທີ່ຈະຂອບພຣະຄຸນພຣະເຈົ້າ." ຫລັງຈາກທຸກຄົນນັ່ງລົງ; ຖາມ: ທ່ານຈະເວົ້າຫຍັງແດ່ເພື່ອຂອບພຣະຄຸນພຣະເຈົ້າ? ໃຫ້ເວລາຕອບ.

2. ອ່ານຈຸດສຳຄັນຂອງບົດຮຽນນີ້, "ພຣະພອນໃນເວລາຂາດເຂີນເຮັດໃຫ້ພວກເຮົາຢາກຂອບພຣະຄຸນດ້ວຍຄວາມຈິງໃຈ." ເປີດການຮຽນດ້ວຍການອະທິຖານ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ຕຽມໂປສເຕີ້ສາມໃບ (81/2 × 11). ແຕ່ລະໃບໃຫ້ຂຽນຫົວຂໍ້ນຶ່ງໃສ່: ການຂອບພຣະຄຸນເລີ້ມມາຈາກໃສ? ການຂອບພຣະຄຸນມີລັກສນະຢ່າງໃດ? ການຂອບພຣະຄຸນແມ່ນແນໃສ່ໃຜ?

4. ເອົາໂປສເຕີ້ທີ່ຂຽນວ່າ "ການຂອບພຣະຄຸນເລີ້ມມາຈາກໃສ?" ຕິດໃສ່ກະດານ. ອະທິບາຍເພງສັຣເສີນ 116: 1-7. ເນັ້ນເຖິງວ່າການຂອບຄຸນທີ່ຈິງແທ້ອອກມາຈາກຄວາມສັມພັນທີ່ມີກັບພຣະເຈົ້າ. ເບິ່ງ "ຄຳພຍານສ່ວນຕົວ" ໃນທ້າຍບົດຮຽນ. ໃຫ້ຜູ້ນຶ່ງເລົ່າຄຳພຍານວ່າລາວໄດ້ມາຮູ້ພຣະເຢຊູໄດ້ຈັກປີແລ້ວ ແລະເລົ່າປະສົບການແບບສັ້ນໆ. ພານັກຮຽນອະທິຖານຂອບພຣະຄຸນພຣະເຈົ້າສຳລັບຄວາມລອດພົ້ນ.

5. ເອົາໂປສເຕີ້ທີ່ຂຽນວ່າ "ການຂອບພຣະຄຸນມີລັກສນະຢ່າງໃດ?" ຕິດໃສ່ກະດານ. ອະທິບາຍບົດຮຽນໃນເພງສັຣເສີນ 116:8-14. ໃຊ້ຄຳຖາມຕໍ່ໄປນີ້ເພື່ອການສົນທະນາ:
    - ໃຫ້ລືມເຣື່ອງໄກ່ແລະໄຂ່. ແມ່ນຫຍັງມາກ່ອນກັນ, ຄວາມຮັກສຳລັບພຣະເຈົ້າ ຫລືການຮູ້ບຸນຄຸນ?
    - ພຣະພອນແນວໃດແດ່ ທີ່ພວກເຮົາມັກລືມຢູ່ເລື້ອຍໆ ເວລາເຮົາສະແດງການຮູ້ບຸນຄຸນຕໍ່ພຣະເຈົ້າ?
    - ມີເຄື່ອງໝາຍ ຫລືຮູບຫຍັງແດ່ທີ່ທ່ານຄິດໄດ້ວ່າສະແດງເຖິງການຂອບພຣະຄຸນ? ເປັນຫຍັງ?

6. ເອົາໂປສເຕີ້ທີ່ຂຽນວ່າ "ການຂອບພຣະຄຸນແມ່ນແນໃສ່ໃຜ?" ອະທິບາຍບົດຮຽນ. ຖາມ: ພວກເຮົາຈະຕອບແທນ

ຄຸນຄວາມດີຂອງພຣະເຈົ້າໄດ້ວິທີໃດແດ່? ອີງຕາມບົດຮຽນ, ເພງສັດເສີນ 116: 15 ມີຄວາມໝາຍແນວໃດ?

- ແມ່ນຫຍັງຄືຈຸດສຳຄັນທີ່ຈະຊ່ວຍຄົນອື່ນໆ ໃນຄຳພຍານຂອງຄຣິສຕຽນ?
- ຄຣິສຕະຈັກພຍາຍາມ "ຖວາຍກຽດພຣະເຈົ້າ" ແນວໃດແດ່ໃນເວລານະມັສການ?

ທ່ານອາດຈະເອົາຮູບໄມ້ກາງແຂນ ແລະຮູບຂັນຖວາຍຊັບມາຕິດໄວ້ໃນຫ້ອງ ຫລືບໍ່ກໍເອົາຂອງແທ້ມາໄວ້. ຖາມ: ຂັນຖວາຍຊັບ ແລະໄມ້ກາງແຂນມີຄວາມສັມພັນແນວໃດແດ່ເລື່ອງການຂອບພຣະຄຸນ?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ເບິ່ງຄຳຖາມເພື່ອການສຳຣວດ, ທ່ານຈະເວົ້າຫຍັງແດ່ເພື່ອຂອບພຣະຄຸນພຣະເຈົ້າ? ໃຫ້ບາງຄົນຕອບຄຳຖາມນີ້. ຂຽນຄຳຕອບໃສ່ກະດານ. ທ່ານອາດຈະເພີ່ມສິ່ງຕໍ່ໄປນີ້: ຮັບໃຊ້ພຣະເຈົ້າ (116:16), ຖວາຍໃຫ້ພຣະເຈົ້າ (116: 17), ແລະນະມັສການພຣະເຈົ້າ (116:18-19). ຊັກຊວນໃຫ້ທຸກຄົນເຮັດສິ່ງເຫລົ່ານີ້ເພື່ອສະແດງການຂອບພຣະຄຸນພຣະເຈົ້າ. ແນະນຳໃຫ້ຂຽນສາມຢ່າງນີ້ເພີ້ມໃສ່ເຈັ້ຽບົດຮຽນຂອງໃຜລາວ.

8. ອ່ານເພງສັດເສີນ 107:43 ໃຫ້ນັກຮຽນຟັງ. ຊັກຊວນໃຫ້ທຸກຄົນຮຽນຮູ້ວິທີທີ່ຈະຂອບພຣະຄຸນພຣະເຈົ້າ. ອະທິຖານປິດ.

*ດຣ. ສີດນີ ຄານ*

## ບົດແນະນຳຄູສອນ
## ບົດຮຽນທີ 10
## ບໍ່ເກີດແຫ່ງຄວາມຮູ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ສຸພາສິດ 1:7; 3:1-20

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ສຸພາສິດ 1--9

**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າຄວາມຮູ້ມາຈາກພຣະເຈົ້າແລ້ວຊີວິດກໍແຈ່ມໃສ

**ຄຳຖາມເພື່ອການສຳຣວດ:** ເປັນຫຍັງຄົນເຮົາຈຶ່ງຂາດຄວາມແຈ່ມໃສໃນເມື່ອຊອກສແວງຫາຢູ່

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າຄວາມຮູ້ນຳໄປເຖິງຄວາມແຈ່ມໃສ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### ບົດນຳ

1. ໃຫ້ນັກຮຽນຂຽນ ຄຳພາສິດ (ສຸພາສິດ) ໂບຮານທີ່ຈື່ໄດ້ຈາກໂຮງຮຽນປະຖົມສຶກສາ ຫລືອ່ານຈາກປຶ້ມອື່ນຜູ້ລະສອງຫລືສາມຢ່າງແລ້ວແບ່ງປັນໃຫ້ນັກຮຽນຈັກສອງສາມຄົນ ໃຫ້ເວລາປະມານ 5 ນາທີ ຫລັງຈາກນັ້ນໃຫ້ແຕ່ລະກຸ່ມລາຍງານສິ່ງທີ່ຮຽນຮູ້ຈາກສຸພາສິດນັ້ນສອນຫຍັງແດ່?

2. **ອ່ານສຸພາສິດ 1:7 ຕົ້ນກຳເນີດຂອງຄວາມຮູ້**

ກ. ກ່ອນອື່ນຕ້ອງຢຳເກງພຣະເຈົ້າ, ແປວ່າ ເອົາໃຈໃສ່ໃນຄຳສອນ, ເຊື່ອໄວ້ວາງໃຈໃນທຸກເຫດການ.

ຂ. ພຣະເຈົ້າເປັນຄວາມຮູ້ ແລະເປັນບໍ່ເກີດແຫ່ງຄວາມຮູ້.

ຄ. ຄວາມຮູ້ທີ່ຊະໂລໂມນກ່າວບໍ່ໝາຍເຖິງການສຶກສາ ເພາະການສຶກສາສູງບໍ່ຊ່ອຍໃຫ້ຮູ້ຈັກກັບພຣະເຈົ້າ ແຕ່ແມ່ນ

1. ການຮູ້ດີ, ຮູ້ຊົ່ວ
   - ກ. ຮູ້ວ່າສິ່ງໃດດີກໍເຮັດສິ່ງນັ້ນ.
   - ຂ. ຮູ້ວ່າສິ່ງໃດບໍ່ດີແລ້ວບໍ່ເຮັດ.
   - ຄ. ຄົນສ່ວນຫລາຍຮູ້ວ່າອັນໃດດີ ແລະອັນໃດຊົ່ວ ແຕ່ບໍ່ໄດ້ເຮັດຕາມການນັ້ນຖືວ່າບໍ່ຮູ້
2. ການຮູ້ຈັກກັບພຣະເຈົ້າອົງທ່ຽງແທ້ ເປັນການສຳເຣັດອັນຍິ່ງໃຫຍ່ໃນຊີວິດ.
3. ຄວາມຮູ້ໃນທາງແຫ່ງຄວາມພົ້ນທັງໃນໂລກນີ້ແລະໂລກໜ້າ, ລາວຈະຮູ້ຊ່ອຍຕົນເອງແລະຊ່ອຍຜູ້ອື່ນອີກດ້ວຍ.

**ອ່ານ 3:1-5 ຜົນຂອງຄວາມຮູ້ໃນພຣະເຈົ້າ**

ກ. ມີຊີວິດຍືນຍາວ ແປວ່າບໍ່ຕາຍໜຸ່ມ(ຄົນທຸກມື້ນີ້ຕາຍໜຸ່ມເພາະເຮັດການບໍ່ດີຫລາຍຢ່າງ).

ຂ. ຈະເຣີນຮຸ່ງເຮືອງ. ເຮັດສິ່ງໃດພຣະເຈົ້າກໍອວຍພອນ

ຄ. ຢ່າປະຖິ້ມຈັກເທື່ອຄວາມຈິງຮັກພັກດີແລະຄວາມສັດຊື່ຈົ່ງເອົາຄ້ອງຄໍເຈົ້າໄວ້ ແປວ່າຈະຢູ່ໃສ, ໄປໃສກໍໃຫ້ມີຄໍາສອນຂອງພຣະເຈົ້າຢູ່ນໍາສເມີ.

ງ. ຈົ່ງຂຽນຈົດຈໍາໄວ້ໃນໃຈ ແປວ່າ 1. ຈິງຮັກພັກດີ 2. ສັດຊື່ຕໍ່ພຣະເຈົ້າ.

**ອ່ານ 3:6-10 ສຸດຍອດຂອງຄວາມຮູ້**

ກ. ເວລາເຮັດທຸກສິ່ງໃຫ້ລະນຶກເຖິງພຣະຜູ້ເປັນເຈົ້າ ແປວ່າໃຫ້ຊອກສແວງຫາການຊົງນໍາ (ຂໍ້ 6).

ຂ. ຢ່າຄຶດວ່າຕົນເອງສລາດ ເພາະວ່າຄວາມສລາດບໍ່ແມ່ນຕົນເອງຄຶດເອງ ແຕ່ແມ່ນຜູ້ອື່ນເຫັນກ່ອນ (ຂໍ້ 7).

ຄ. ໃຫ້ເວັ້ນຈາກການເຮັດຜິດ, ແຕ່ທາງຈະເວັ້ນນັ້ນມັນຂຶ້ນຢູ່ກັບຄວາມຮູ້ແລະຄວາມເຂົ້າໃຈຂອງຄົນນັ້ນ (ຂໍ້7)

ງ. ຢາວິເສດທີ່ປົວບາດແຜ, ຫາກປະຕິບັດຕາມຄໍາສັ່ງຂອງພຣະເຈົ້າກໍຈະເປັນດັ່ງນັ້ນແທ້ (ຂໍ້ 8).

ຈ. ຖວາຍກຽດດ້ວຍຜົລປູກອັນດີທີ່ສຸດ ໝາຍເຖິງການຖວາຍຜົລແຮກ (ຂໍ້ 9).

ສ. ເຂົ້າເຕັມເລົ້າ ແລະມີເຫລົ້າອະງຸ່ນຫລາຍ ໝາຍເຖິງພຣະພອນທີ່ໄດ້ຮັບເມື່ອຟັງຄວາມ.

**ອ່ານ 3:11-20 ການເອົາໃຈໃສ່ໃນຄໍາສອນ**

ກ. ລູກເອີຍ, ເປັນຄໍາເວົ້າອັນອ່ອນຫວານທີ່ພຣະເຈົ້າເວົ້າກັບລູກຂອງພຣະອົງ ຊະໂລໂມນເປັນກະສັດຂອງຊາດຢິວກໍປຽບເໝືອນພໍ່ຂອງຊາດຢິວ (ຂໍ້ 11).

ຂ. ຈົ່ງຕັ້ງໃຈຟັງ ແປວ່າຢ່າປະລະຄໍາສອນຂອງພຣະເຈົ້າ (ຂໍ້ 11).

ຄ. ຜູ້ມີຄວາມສຸກທີ່ແທ້ແມ່ນຜູ້ເຂົ້າໃຈໃນເຣື່ອງພຣະເຈົ້າ (ຂໍ້ 13).

ງ. ປໂຍດອັນມະຫາສານຂອງປັນຍາ 1. ມີຊີວິດຍືນຍາວ 2. ຊັບສົມບັດ 3. ກຽດຕິຍົດ. 4. ມ່ວນຊື່ນແລະປອດພັຍ (ຂໍ້ 16-17).

# <u>ບົດແນະນຳຄຣູສອນ</u>

# <u>ບົດຮຽນທີ 11</u>

# <u>ຄວາມຮູ້ພາໃຫ້ເຮັດຖືກຕ້ອງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ສຸພາສິດ 11:1-11, 17-21, 23-28

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ສຸພາສິດ 10:1--22:16

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄົນສລາດຈະເຮັດຕາມນ້ຳພຣະທັຍສເມີ

**<u>ຄຳຖາມເພື່ອການສຳຣວດ:</u>** ປັນຍາເບິ່ງເຫັນອະນາຄົດຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊອກເບິ່ງວ່າການດຳຣົງຊີວິດດ້ວຍປັນຍາຈະມີດີຢ່າງໃດ?

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.

## <u>ວິທີສອນ</u>

1. ຂຽນໃສ່ກະດານ "<u>ຄົນສິນທັມທີ່ພຣະຄັມພີກ່າວແມ່ນຄົນແນວໃດ?</u>" ໃຫ້ນັກຮຽນອອກຄຳເຫັນຈັກຫ້ານາທີ ແລະ ຂຽນຄຳເຫັນຂອງນັກຮຽນລົງກະດານ.

2. ຂຽນໃສ່ກະດານ "<u>ເຮັດແນວໃດເຮົາຈຶ່ງຈະເປັນຄົນສິນທັມ?</u>" ໃຫ້ນັກຮຽນອອກຄຳເຫັນແລະຂຽນຄຳເຫັນຂອງນັກຮຽນລົງກະດານ.

3. <u>ອ່ານ 11:1-11 ລາງວັນມີໃຫ້ຄົນສິນທັມທຸກວັນ</u>

ກ. ໃນສມັຍບູຮານໃຊ້ຕາຊິ່ງທີ່ເຮັດດ້ວຍໄມ້, ດ້ວຍຫີນ ແລະດ້ວຍເງິນ ໃນການຄ້າຂາຍ.
ຂ. ພວກພໍ່ຄ້າມັກໂລບຕາຊິ່ງເປັນສິ່ງທີ່ພຣະເຈົ້າກຽດຊັງພວກຂີ້ໂລບ.
ຄ. ພຣະອົງຊົງດີໃຈນຳຜູ້ຊັ່ງຊິງຢ່າງຖືກຕ້ອງ ສະແດງວ່າລາວຕ້ອງໄດ້ຮັບພຣະພອນ (ຂໍ້ 1).
ງ. ຄົນອວດດີ ໝາຍເຖິງຄົນອວດເກັ່ງ ແນວໃດກໍຮູ້ໝົດ ແຕ່ເຮັດຫຍັງບໍ່ຖືກຈັກຢ່າງ (ຂໍ້ 2).
ຈ. *ຄົນດີມີຄວາມສັດຊື່ນຳພາ* ແປວ່າ ຄົນດີແມ່ນຄົນສັດຊື່ (ຂໍ້ 3).
ສ. *ຄົນຄົດລ້ຽວ ກໍຖືກທຳລາຍດ້ວຍຄວາມຄົດລ້ຽວ* (ຂໍ້ 3) ລາວຄົດລ້ຽວຕໍ່ຜູ້ອື່ນໆກໍຄົດລ້ຽວຕໍ່ລາວ.
ຊ. *ຄວາມຮັ່ງມີຈະຊ່ອຍຫຍັງບໍ່ໄດ້ ໃນມື້ທີ່ປະເຊີນກັບຄວາມຕາຍ* (ຂໍ້ 4) ເງິນຄຳຊື້ຊີວິດບໍ່ໄດ້.
ຍ. *ເມື່ອຄົນຊົ່ວຮ້າຍຕາຍໄປ ຄວາມຫວັງຂອງລາວກໍໄປດ້ວຍ* (ຂໍ້ 7) ເພາະຄົນຊົ່ວຮ້າຍບໍ່ມີສ່ວນໃນສວັນ
ດ. *ຄົນຊອບທັມໄດ້ຮັບການຄຸ້ມຄອງໃຫ້ພົ້ນຈາກຄວາມເດືອດຮ້ອນ* (ຂໍ້ 8). ເພາະວ່າພຣະເຈົ້າຊົງຊ່ອຍຄົນ

ຊອບທັມ

ຕ. *ຄົນບໍ່ຮູ້ຈັກພຣະເຈົ້າທໍາລາຍຄົນດ້ວຍຄໍາເວົ້າຂອງຕົນ* (ຂໍ້ 9) ເພາະວ່າຄໍາເວົ້າເປັນອາວຸດທີ່ຮ້າຍທີ່ສຸດໃນໂລກ

ຖ. ຂໍ້ 10-11 ທັງສອງຂໍ້ນີ້ເວົ້າເຖິງຄົນດີມີປະໂຍດແກ່ສັງຄົມ, ແກ່ບ້ານເມືອງອີກດ້ວຍ

## ອ່ານ 11:17-21, 23-25, 28 ຜົນຮັບຂອງການກະທໍາ

ກ. ຂໍ້ 17-18 ທັງຄົນສິນທັມແລະຄົນຊົ່ວຈະຕ້ອງຮັບຜົນກໍາທີ່ເຂົາສ້າງ .

ຂ. *ຜູ້ທີ່ຕັ້ງໝັ້ນຢູ່ໃນຄວາມຊອບທັມຈະມີຊີວິດຢູ່* (ຂໍ້ 19) ແປວ່າຈະມີຊີວິດໃນຟ້າສວັນ. .

ຄ. *ພະເຈົ້າຊົງກຽດຊັງຄົນມີໃຈຊົ່ວຊ້າ* (ຂໍ້ 20-21) ທຸກດວງໃຈທີ່ຄິດຊົ່ວພຣະເຈົ້າກຽດຊັງ .

ງ. *ຜູ້ຍິງງາມແຕ່ບໍ່ສລາດ ກໍປານວ່າເອົາແຫວນຄໍາເກາະດັງໝູ* (ຂໍ້ 22) ເອົາແຫວນຄໍາເກາະໃສ່ດັງໝູງ ມັນບໍ່ຮູ້ຄຸນຄ່າມັນກໍຈະຢຽບຖິ້ມ, ຍິງງາມແຕ່ບໍ່ສລາດ ຄວາມງາມນັ້ນກໍບໍ່ເໝາະກັບລາວ . ອ່ານມັດທາຍ 7:6.

ຈ. *ຍິ່ງໃຫ້ຍິ່ງມີ ຍິ່ງຂີ້ຖີ່ຍິ່ງທຸກຈົນລົງ* (ຂໍ້ 24) ໝາຍເຖິງຄົນທີ່ມັກໃຫ້ຄົນອື່ນກໍຈະໄດ້ຮັບພຣະພອນເພີ້ມສ່ວນ ຜູ້ຂີ້ຖີ່ນັ້ນມີຫລາຍເທົ່າໃດກໍແຮງວ່າບໍ່ມີຢ່ານໂຕເອງທຸກ ກໍເລີຽເປັນທຸກຍ້ອນບໍ່ພໍ່. *ເພາະວ່າທຸກຄົນທີ່ມີຢູ່ແລ້ວຈະຊົງເພີ້ມເຕີມໃຫ້ຜູ້ນັ້ນອີກຈົນມີບໍຣິບູນ ແຕ່ຜູ້ທີ່ບໍ່ມີແມ່ນສິ່ງທີ່ຕົນມີຢູ່ນັ້ນກໍຈະຊົງຍຶກໄປຈາກຕົນເສັຽ*" (ມັດທາຍ 25:29).

ສ. *ຜູ້ທີ່ເພິ່ງໃນຊັບສົມບັດຂອງຕົນນັ້ນ ຈະຖືກທໍາລາຍດັ່ງໃບໄມ້ທີ່ຫລົ່ນຈາກກົກ* (ຂໍ້ 28). ຂໍ້ 4 ບອກແຈ້ງວ່າ "*ຄວາມຮັ່ງມີຈະຊ່ອຍຫຍັງບໍ່ໄດ້ໃນມື້ທີ່ປະເຊີນກັບຄວາມຕາຍ*" ເຣື່ອງຂອງຊີໂມນໝໍມົນຢາກຊື້ຣິດອໍານາດພຣະວິນຍານດ້ວຍເງິນ ກໍຖືກສາວົກເປໂຕສາບແຊ່ງຊ້ໍາ (ກິຈການ 8:1-19).

## ຄໍາຖາມ:

1. ຫາກທ່ານເປັນຜູ້ຄ້າຂາຍ ຫລືມີຮ້ານຄ້າຂາຍທ່ານຈະຂາຍດ້ວຍຄວາມສັດຊື່ບໍ່? ເພາະການບໍ່ສັດຊື່ພຣະເຈົ້າກຽດຊັງ

2. ທ່ານຈະເຮັດແນວໃດຈຶ່ງຈະບໍ່ເປັນຄົນອວດດີທີ່ມີວັນນຶ່ງຈະຕ້ອງຖືກຂາຍໜ້າ?

3. ເຮັດແນວໃດຈຶ່ງຈະຮູ້ວ່າຕົນເອງເປັນຄົນຂີ້ຖີ່? ຫາກຮູ້ແລ້ວຈະເຮັດແນວໃດ?

4. ເປັນຫຍັງຜູ້ທີ່ເພິ່ງໃນຊັບສົມບັດຈະຕ້ອງຖືກທໍາລາຍຢ່າງໃບໄມ້ລົ່ນໃນຣະດູໃບໄມ້ປົ່ງ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ຢູ່ຢ່າງຜູ້ມີປັນຍາ

---

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນນີ້: | ສຸພາສິດ 22:17-25; 23:10-11, 19-28; 24:10-12, 15-20 |
| ຂໍ້ພຣະຄັມພີສຳລັບບົດຮຽນນີ້: | 22:17--24:22 |
| ຈຸດສຳຄັນຂອງບົດຮຽນນີ້: | ປັນຍາພາຢູ່ຢ່າງຖືກຕ້ອງ |
| ຄຳຖາມເພື່ອການສຳຣວດ: | ຄຳພາສິດໂບຮານຊ່ອຍຄົນສມັຍໃໝ່ແນວໃດ? |
| ຈຸດປະສົງຂອງບົດຮຽນນີ້: | ເພື່ອຊອກເບິ່ງວ່າພາສິດບູຮານແປງທາງຄົນສມັຍໃໝ່ໄດ້ |

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

## ວິທີສອນ

1. ຫລັງຈາກອ້ອນວອນຂໍການຊົງນຳແລ້ວ ເລີ້ມຖາມຜູ້ນຶ່ງໃນຫ້ອງຮຽນວ່າ "ສົມມຸດວ່າ Manager ບອກທ່ານວ່າຟັງ ຂ້ອຍຈະບອກວຽກໃນມື້ນີ້" ທ່ານຈະເຮັດແນວໃດ? ໃຫ້ໂອກາດເພິ່ນຕອບ ແລະຖາມອີກຜູ້ນຶ່ງວ່າ ທ່ານເດຈະເຮັດແນວໃດ?

2. ບອກນັກຮຽນວ່າ "ວັນນີ້ມີຜູ້ນຶ່ງຍິ່ງໃຫຍ່ກວ່າ Manager ຈະບອກທ່ານໆຈະຟັງໄດ້ດີຫລາຍປານໃດ ໃນຖານະເຮົາທັງຫລາຍເປັນໄພ່ພົນຂອງພຣະເຈົ້າ".

3. **ອ່ານ 22:22-23 ການປະຕິບັດກັບຄົນຍາກຈົນ**
   ກ. ໃຫ້ນັກຮຽນອອກຄຳເຫັນຄຳວ່າເອົາປຽບແປວ່າຫຍັງ?
   ຂ. ພວກເຈົ້ານາຍແລະຄົນຮັ່ງມີເອົາປຽບຄົນຍາກຈົນໃນສມັຍສັກດີນາ.
   ຄ. ຊະໂລໂມນບໍ່ເຫັນດີໃນເຣື່ອງການເອົາປຽບຊຶ່ງກັນແລະກັນ ແລະຍັງອອກຄຳສັ່ງບໍ່ໃຫ້ເອົາປຽບກັນ.

4. **ອ່ານ 22:24-25 ອັນຕະລາຍຂອງການຄົບຄົນ**
   ກ. ຫ້າມບໍ່ໃຫ້ຄົບຄົບໃຈຮ້ອນແລະຄົນໂຫດຮ້າຍ ເພາະຢ້ານເຮົາຈະຕິດເອົານິສັຍນັ້ນ.
   ຂ. ມະນຸສເລືອກເກີດບໍ່ໄດ້ ແຕ່ເລືອກຈະເປັນຄົນດີຫລືຊົ່ວໄດ້.

**5. ອ່ານ 23:19-21 ຄົບເພື່ອນຜິດພາຄິດຈົນຕາຍ**

ກ. ໃຫ້ຣະວັງໃນການເລືອກໝູ່ເພື່ອນ

ຂ. ຄົບຄົນຊົ່ວໄດ້ ແຕ່ຢ່າເປັນຄົນຊົ່ວນຳເຂົາ

ຄ. ຄົນກິນເຫລົ້າຫລາຍຫາກເມົາແລ້ວກໍມີແຕ່ນອນ ຫາກເຮັດດັ່ງນີ້ເຈົ້າຈະນຸ່ງສົ້ງຂາດ ແປວ່າຄວາມຍາກຈົນມາເຖິງ.

**6. ອ່ານ 23:22-25 ຄົນມີປັນຍາຈະຟັງຄວາມພໍ່ແມ່**

ກ. ຟັງຄວາມພໍ່ແປວ່າເຊື່ອແລະປະຕິບັດຕາມຄຳສັ່ງສອນ, ບໍ່ຖຽງຄວາມ, ບໍ່ໝິ່ນປມາດ.

ຂ. ຜູ້ໃດຟັງຄວາມພໍ່ແມ່ຈະກາຍເປັນຄົນມີປັນຍາ. ພຣະເຈົ້າເປັນຜູ້ສ້າງມະນຸດ ເຮົາແມ່ນຜູ້ໃດຈຶ່ງຖຽງກັບພຣະອົງ.

ຄ. ປັນຍາມີຄ່າສູງສົມຄວນຊື້ໄວ້ ໝາຍຄວາມວ່າ ເໝາະສົມທີ່ຈະລົງທຶນໃນການຊອກຫາປັນຍາ.

**7. ອ່ານ 24:10 ຢ່າອ່ອນແອ**

ກ. ມະນຸດເຮົາມັກຈະເວົ້າວ່າ ຂ້ອຍເປັນຄົນກ້າຫານ ແລະເຂັ້ມແຂງ. ຊາໂລໂມນບອກວ່າ ຜູ້ກ້າຫານແລະເຂັ້ມແຂງແທ້ ແມ່ນຜູ້ປະເຊີນກັບຍາມຄັບຂັນ ຫລືອັນຕະລາຍມາກໍບໍ່ທໍ້ຖອຍ ແລະຜ່ານໄປໄດ້.

ຂ. ເຢເຣມີຢາຖາມພຣະເຈົ້າເມື່ອປະສົບບັນຫາ, ພຣະເຈົ້າຕອບ *ຖ້າເມື່ອຍແລ່ນແຂ່ງກັບຄົນ ເຮັດຈັ່ງໃດເຈົ້າຈະແລ່ນແຂ່ງກັບໂຕມ້າໄດ້.* ບໍ່ແມ່ນພຣະເຈົ້າຫວັງໃຫ້ເຮົາແລ່ນແຂ່ງມ້າ ແຕ່ໝາຍຄວາມ ຫາກພົບບັນຫາໃຫຍ່ກວ່ານີ້ເຈົ້າຈະທົນໄດ້ຫລື

**8. 24:11-16 ການເລືອກທາງ**

ກ. *ຂ້ອຍຄົນພວມຈະຖືກປະຫານຊີວິດຢ່າງບໍ່ຍຸດຕິທຳ* ແປວ່າຢ່າສູ່ຍ້ານໃນການເຮັດດີ ເພາະເປັນໜ້າທີ່ຂອງຄຣິສຕຽນຈະຕ້ອງເຮັດດີ.

ຂ. *ພຣະອົງຈະຕອບແທນ ຕາມທີ່ເຈົ້າໄດ້ເຮັດນັ້ນ* ແປວ່າ ການດີທຸກຢ່າງທີ່ເຮົາເຮັດພຣະເຈົ້າບັນທຶກແລ້ວ.

ຄ. *ຈົ່ງກິນນໍ້າເຜິ້ງເພາະມັນແຊບດີ* ແປວ່າປັນຍາທີ່ເພິ່ນສອນມັນຈະຫວານໃນຊີວິດປຽບດັ່ງນໍ້າເຜິ້ງ.

ງ. *ຢ່າເປັນດັ່ງຄົນຊົ່ວຮ້າຍທີ່ວາງແຜນປຸ້ນ* ແປວ່າຄົນຊົ່ວຮ້າຍປຸ້ນມາໄດ້ກໍແມ່ນຊົ່ວຄາວ, ຄຳວ່າປຸ້ນແມ່ນຮວມທັງການຂີ້ສໍ້, ຂີ້ໂກງເອົາຂອງຜູ້ອື່ນເຫລົ່ານີ້ແມ່ນການປຸ້ນໂດຍບໍ່ມີອາວຸດ.

ຈ. *ຖ້າເຈົ້າສົມນໍ້າໜ້າລາວ ພຣະຜູ້ເປັນເຈົ້າອາດບໍ່ລົງໂທດລາວກໍໄດ້,* ຫລືບາງທີອາຈລົງໂທດຜູ້ເຍາະເຍີ້ຍ.

ສ. *ຢ່າຄິດອິດສາຄົນຊົ່ວຮ້າຍບໍ່ມີອະນາຄົດ,* ພວກຄົນຊົ່ວຮ້າຍຈະຢູ່ດີ, ກິນດີຊົ່ວຄາວເທົ່ານັ້ນ ເຂົາບໍ່ມີສ່ວນໃນແຜ່ນດິນສວັນຂອງພຣະເຈົ້າ.

*ດຣ.ທຸນພັນ ວົງສຸຣິດທ໌*

## ບົດຮຽນທີ 13
## ສັມພັນຢ່າງມີປັນຍາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ສຸພາສິດ 25:11-23; 26:18-28
**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 25--31
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອເຂົ້າໃຈໃຊ້ປັນຍາໃນການຜູກສັມພັນກັບຄົນອື່ນ
**ຄຳຖາມເພື່ອການສຳຣວດ:** ຈະຢູ່ຢ່າງສັນຕິກັບຍາດພີ່ນ້ອງໄດ້ຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີໃຊ້ພຣະທັມສຸພາສິດເພື່ອການປອງດອງຕໍ່ຄົນອື່ນ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

### ວິທີສອນ

1. ຂຽນເລກ 10-1 ຈາກເທິງລົງລຸ່ມ ແລ້ວຖາມນັກຮຽນວ່າ ການເລືອກຄົບຄົນຂອງທ່ານງ່າຍປານໃດຫາກຕວງໃສ່ຕົວເລກຈາກ 1-10?. ເປັນຫຍັງ?

2. ທ່ານເປັນຄົນເພິ່ງໄດ້ ຫລືອາສັຍໄດ້ລະດັບໃດ ຫາກຕວງໃສ່ຕົວເລກຈາກ 1-10? ຫລັງຈາກນັກຮຽນຕອບແລ້ວ ບອກນັກຮຽນວ່າວັນນີ້ບົດຮຽນມີຊື່ເຣື່ອງວ່າ **ສັມພັນຢ່າງມີປັນຍາ**

**3. ອ່ານ 25:11-12 ຄ່າຂອງປັນຍາ**

ກ. ຄຣິສຕຽນສອນກັນດ້ວຍຫລັກຈະຣິຍະທັມ, ແປວ່າຄຳເວົ້າທີ່ເປັນທັມ (ຄຳເວົ້າຫຼືຄຳສອນຂອງພຣະເຈົ້າ).
ຂ. ອາທິບາຍ ຄຳປະດັບຢູ່ໃນເງິນ.
ຄ. ອາທິບາຍ *ຜູ້ທີ່ຍອມຟັງຄຳເຕືອນຂອງຄົນມີປັນຍາ ກໍມີຄຸນຄ່າກວ່າແຫວນຄຳຫລືເຄື່ອງເອ້ທີ່ເປັນຄຳນໍ້າໜຶ່ງ*

**4. ອ່ານ 25:13-14 ຈົ່ງເປັນທີ່ເຊື່ອຖື**

ກ. ອະທິບາຍ ນໍ້າເຢັນ ແລະຊາວນາໃນຍາມກ່ຽວ, ຜູ້ປະກາດຂ່າວປະເສີດເປັນຄືນໍ້າເຢັນກັບຊາວນາ. ສອນເຮົາໃນການເວົ້າພຣະທັມພຣະເຈົ້າ ໃຫ້ເປັນຄືນໍ້າເຢັນກັບຊາວນານີ້.
ຂ. *ຄົນທີ່ສັນຍາຈະເອົາຂອງໃຫ້ແຕ່ບໍ່ໃຫ້ກໍສ່ຳກັບເມກໝອກແລະລົມບໍ່ມີຝົນ* ບໍ່ສັນຍາດີກວ່າເພາະຈະກາຍເປັນຄົນທີ່ເຊື່ອຖືບໍ່ໄດ້.

**5. ອ່ານ 25:15 ອົດທົນນຳຄົນທີ່ມີອຳນາດ**

ກ. ຄວາມສຳເຣັດ ແມ່ນໝາກຜົນຂອງຄວາມອົດທົນ.

ຂ. ການຊັກຊວນຄົນຕ້ອງໃຊ້ຄວາມອົດທົນດົນນານ.

6. <u>ອ່ານ 25:16-20 ລະວັງຄົນບາງປະເພດ</u>

ກ. ເຣື່ອງນ້ຳເຜີ້ງ

1. ນ້ຳເຜີ້ງເປັນປັນຍາທີ່ຈະຕ້ອງຮຽນຮູ້.

2. ນ້ຳເຜີ້ງເປັນເໝືອນຄົນປາກຫວານ.

ຂ. ລະວັງຄົນປາກຫວານ, ຢ່າເປັນຄົນປາກຫວານ (ບໍ່ໝາຍຄວາມວ່າເປັນຄົນເວົ້າບໍ່ມ່ວນ).

ຄ. *ການເພິ່ງພາຜູ້ເຊື່ອໃຈບໍ່ໄດ້ໃນຍາມຄັບຂັນ ກໍສ່ຳກັບແຂ້ວຄອນຫຍໍ້າເຂົ້າ*

1. ຄວນເປັນທີ່ເພິ່ງຂອງຄົນອື່ນທີ່ເຊື່ອໃຈໄດ້.

2. ຫາກຈະເພິ່ງຜູ້ໃດ ຈົ່ງຮຽນຮູ້ເພິ່ນກ່ອນ.

ງ. *ຮ້ອງເພງໃຫ້ຄົນທຸກໃຈຟັງ ກໍສ່ຳກັບແກ້ເສື້ອໃນຍາມໜາວ ຫລືເອົາເກືອໂຮຍໃສ່ບາດ* ເລົ້າໂລມໃຈດີກວ່າ.

7. <u>ອ່ານ 26: 18-21 ຄົນສັບສົນຫວຸ້ນວາຍ</u>

ກ. ຢ່າຄົບກັບຄົນແນວນີ້.

ຂ. ຢ່າເປັນຄົນແນວນີ້.

ຄ. ຄົນແນວນີ້ ພຣະເຢຊູກ່າວວ່າ *ເອົາຫີນໂມ້ກ້ອນໃຫຍ່ຜູກຄໍຜູ້ນັ້ນຈົມລົງນ້ຳທະເລເລິກ ເສັຽກໍດີກວ່າ* "
(ມັດທາຍ 18:6)

8. <u>ອ່ານ 26:23-28 ຫລັກສະນະຄົນຂີ້ຕົວະ</u>

ກ. ອະທິບາຍເງິນໂອບໝໍ້ດິນດາກ.

ຂ. ຄົນໜ້າຊື່ໃຈຄົດ ເປັນຄືນາຍພານຫ້າງແຮ້ວໃສ່ຕົນເອງ.

<u>ຄຳຖາມ:</u>

1. ທ່ານຮຽນຮູ້ຫຍັງແດ່ໃນບົດຮຽນວັນນີ້

2. ມີຫຍັງແດ່ທີ່ທ່ານຈະຕ້ອງປ່ຽນແປງໃນການດຳຣົງຊີວິດຂອງທ່ານ

*ດຣ. ທຸມພັນ ວົງສຸຣິດທ໌*